**ການບ້ານບົດທີ 7 ພາກຕົ້ນ**

# ການປະກາດໃນກຸງໂລມ

(ກິດຈະການ 28:16-31)

*ໂປໂລຮັບໃຊ້ພະເຈົ້າໃນກຸງໂລມເຊັ່ນດຽວກັບທີ່ຮັບໃຊ້ໃນກາຍຊາເລຍ ຄືໃນ 4 ດ້ານຕໍ່ໄປນີ້:*

- *ປະກາດໃຫ້ແຂກທີ່ມາຢ້ຽມ.*
- *ໃຊ້ຜູ້ອື່ນອອກໄປປະກາດ.*
- *ຂຽນຈົດໝາຍ.*
- *ອ້ອນວອນ.*

*ແຕ່ກ່ອນທີ່ເຮົາຈະຮຽນເລື່ອງສະຖານທີ່ໃໝ່ນີ້.*

## ແນະນຳໃນກຸງໂລມ

**1** ກຸງໂລມມີຄົນເສລີໜຶ່ງລ້ານຄົນ ແລະມີຂ້ອຍຂ້າອີກໜຶ່ງລ້ານຄົນ.

ກ. ທັງໝົດກຸງໂລມມີຈັກຄົນ? ______________________________

ຂ. ໂປໂລບໍ່ເຄີຍເຫັນເມືອງທີ່ໃຫຍ່ປານນັ້ນຈັກເທື່ອ ແຕ່ພີ່ນ້ອງຄຣິດສະຕຽນຊ່ວຍຫາເຮືອນໃຫ້ຢູ່ໄດ້. ເພິ່ນອາໄສໃນເຮືອນ ຢ່າງໃດ? (ກຈກ 28:30) ______________________

ຄ. ແມ່ນໃຜຍາມຮັກສາໂປໂລໄວ້? (ຂໍ້ 16) ______________________

ງ. ໂປໂລມີສິດຮັບໃຜເຂົ້າເຮືອນ? (ຂໍ້ 30) ______________________

ຈ. ໂປໂລປະກາດຫຍັງໃຫ້ແຂກນັ້ນຟັງ? (ຂໍ້ 31) ______________________

*ໂປໂລຢູ່ຢ່າງນັ້ນ 2 ປີ ໃນກຸງໂລມ, ຄືໄລຍະເວລາດຽວກັນທີ່ຖືກຂັງໄວ້ໃນເມືອງກາຍຊາເລຍ.*

**2** ຜູ້ທີ່ອາໄສກັບໂປໂລກໍອາດຈະມີຫຼາຍຄົນນຳກັນ.

ກ. ໝໍຢາຄົນໃດຢູ່ນຳ? (ກລຊ 4:14) ______________________

ຂ. ຄົນໃດທີ່ຮັບເຊື່ອໃນເມືອງເທຊະໂລນິກ? (ກລຊ 4:10) ______________________

ຄ. ຄົນໃດທີ່ຊ່ວຍຕັ້ງຄຣິດສະຕະຈັກໃນໂກໂລຊາຍ? (ກລຊ 4:12) ______________

ງ. ອີກຄົນໜຶ່ງທີ່ຢູ່ກັບໂປໂລຈົນເຖິງໂປໂລໃຊ້ໄປທີ່ອື່ນ ຄືໃຜ? (ກລຊ 1:1) __________

ຈ. ຕາມໃນ ອຟຊ 5:19 ໂປໂລນິຍົມດົນຕີຄຣິດສະຕຽນຫຼາຍຢ່າງ ດັ່ງນັ້ນເພື່ອນບ້ານໃນກຸງໂລມອາດຈະໄດ້ຍິນ ເຂົາຮ້ອງຫຍັງ? ______________________

**3** ໂປໂລບໍ່ໄດ້ພັກຜ່ອນດົນດອກ.

ກ. ຢູ່ມາຈັກວັນກ່ອນໂປໂລເຊີນພວກຜູ້ໃຫຍ່ມາ? (ກຈກ 28:17) ______________

ຂ. ເຊີນພວກຜູ້ໃຫຍ່ພວກໃດມາປະຊຸມ? ______________________

ຄ. ມີຄົນຢິວຫຼາຍຄົນຢູ່ປະຈຳໃນກຸງໂລມ ດັ່ງນັ້ນເມື່ອເຂົານັດວັນພົບກັບໂປໂລມີຄົນຈຳນວນຫຼາຍປານໃດມາ? (ກຈກ 28:23) ______________________

ງ. ເຂົາຟັງຕັ້ງແຕ່ເຊົ້າຈົນຄ່ຳ, ລາງຄົນຍອມຫຍັງ? (ຂໍ້ 24) ________________

ຈ. ອີກລາງຄົນເດ້? ________________

## ໂປໂລປະກາດໃຫ້ແຂກທີ່ມາຢ້ຽມ

**4** ກ. ໂປໂລຊວນໃຫ້ຜູ້ໃຫຍ່ພວກຢິວເຂົ້າມາໃນເຮືອນກ່ອນ. ປົກກະຕິໂປໂລປະກາດໃຫ້ພວກໃດກ່ອນ? (ໂລມ 1:16)

________________




ຂ. ເຫັນວ່າຄົນຢິວສ່ວນຫຼາຍບໍ່ຮັບເຊື່ອ, ໂປໂລປະກາດໃຫ້ຊາດໃດຕໍ່ໄປ? (ກຈກ 28:28) ________________

ຄ. ຄົນຕ່າງຊາດນັ້ນຮັບຫຍັງ? ________________

**5** ມີອີກຄົນໜຶ່ງທີ່ເປັນນ້ອງຂອງບາລະນາບາມາຢູ່ດ້ວຍ ຄື ຄົນທີ່ໜີປະເຂົາເທື່ອໜຶ່ງ. ມາເຖິງນີ້ ໂປໂລຍົກໂທດຜິດໃຫ້ເຂົາແລ້ວ ຄືໃຜ? (ກລຊ 4:10) ________________

**6** ແຂກອີກຜູ້ໜຶ່ງທີ່ມາຫາໂປໂລໃນຍຸກນັ້ນ ຄືຂ້າທາດຜູ້ໜຶ່ງທີ່ໜີຈາກໃນເມືອງໂກໂລຊາຍ.

ກ. ຂ້າທາດນັ້ນຊື່ຫຍັງ? (ຟີເລໂມນ ຂໍ້ 10) ________________

ຂ. ນາຍຂອງຂ້າທາດຊື່ຫຍັງ? (ຟລມ ຂໍ້ 2) ________________

ຄ. ໂອເນຊີໂມຮັບເຊື່ອໃນພະເຢຊູແລ້ວ ໂປໂລຈຶ່ງຖືວ່າເປັນລູກຂອງໃຜ? (ຟລມ ຂໍ້ 10) ________________

> ຈັກກະພັດໂລມໃນສະໄໝນັ້ນມີກົດໝາຍທີ່ປ່າເຖື່ອນ ຊຶ່ງອະນຸຍາດໃຫ້ນາຍຂອງທາດຂ້າທາດໄດ້ຖ້າທາດ ໜີໄປ. ຟີເລໂມນມີສິດທີ່ຈະຂ້າໂອເນຊີໂມໂດຍບໍ່ມີໃຜຈະຕິຕຽນ, ໂປໂລເຫັນວ່າທັງນາຍທາດກັບຂ້ອຍຂ້າ ມາເປັນຄຼິດສະຕຽນທັງສອງ. ເພິ່ນຂໍໃຫ້ຂ້ອຍຂ້າທີ່ໜີໄປ ກັບໄປຫານາຍທາດເພື່ອຈະຂໍໃຫ້ຍົກໂທດ. ໂປໂລ ຝາກຈົດໝາຍໄປຂໍໃຫ້ຟີເລໂມນ ຊຶ່ງເປັນນາຍທາດໃຫ້ຍົກໂທດ ແລະຍິ່ງກວ່ານັ້ນອີກ ໃຫ້ຖືວ່າເປັນພີ່ນ້ອງໃນ ພະເຢຊູ. ເປັນການສ່ຽງໄພແທ້ ໆ!

**7** ກ. ໂປໂລຂໍໃຫ້ຟີເລໂມນຮັບໂອເນຊີໂມຢ່າງບໍ່ແມ່ນຂ້ອຍຂ້າຕໍ່ໄປ ແຕ່ດີກວ່ານັ້ນອີກໃຫ້ຖືວ່າຫຍັງ? (ຟລມ 16) ________________

ຂ. ໂປໂລຂຽນຈົດໝາຍອີກສະບັບໜຶ່ງໄປເຖິງທັງຄຼິດສະຕະຈັກໂກໂລຊາຍວ່າ ຖ້າແມ່ນຜູ້ໃດມີເລື່ອງຕໍ່ກັນ ຈຶ່ງເຮັດຫຍັງ? (ກລຊ 3:13) ________________

**8** ພະເຢຊູສອນພວກສາວົກໃຫ້ອ້ອນວອນດັ່ງຕໍ່ໄປນີ້ "ຂໍຊົງໂຜດຍົກໂທດໃຫ້ຂ້າພະອົງ ເໝືອນຂ້າພະອົງຍົກໂທດໃຫ້ແກ່ ຜູ້ທີ່ເຮັດຜິດຕໍ່ຂ້າພະອົງນັ້ນ".

ກ. ໂປໂລຍົກຜິດໃຫ້ໃຜທີ່ປະການປະກາດພະທຳ? ________________

ຂ. ໂປໂລຂໍໃຫ້ຟີເລໂມນຍົກຜິດໃຫ້ໃຜ? ________________

*ໃຫ້ອ່ານ ກລຊ 3:13 ອີກ, ແລ້ວສຳນຶກຕົວເອງວ່າ ຈະປະຕິບັດຕາມໄດ້ຫຼືບໍ່!*

**9** ກ. ມີອີກຜູ້ໜຶ່ງເອົາຂອງມາຈາກຄຼິດສະຕະຈັກຟີລິປອຍ. ແມ່ນໃຜເອົາຂອງນັ້ນມາ?
(ຟລປ 4:18) ______________________________

ຂ. ເພິ່ນຮ່ວມງານກັບໂປໂລ ຫຼັງຈາກນັ້ນບໍ່ສະບາຍຈົນເປັນແນວໃດ? (ຟລປ 2:27) ______
ແຕ່ພະເຈົ້າໂຜດໃຫ້ດີຈົນກ່ວາໂປໂລໃຊ້ເພິ່ນກັບໄປຟີລິບປອຍ.

**10** ກ. ມີອີກຈຳພວກໜຶ່ງທີ່ບໍ່ຕັ້ງໃຈຈະຢູ່ກັບໂປໂລ ຄືພວກໃດ? (ກຈກ 28:16) ___________

ຂ. ໂປໂລສັງເກດຮູ້ເລື່ອງການຢູ່ການກິນຂອງເຂົາ ຈົນໄດ້ຍົກຫຍັງເປັນຄວາມປຽບທຽບກັບ
ຊີວິດຄຼິດສະຕຽນ? (ອຟຊ 6:10-18) ______________________________

ຄ. ເປັນໂອກາດດີທີ່ສຸດທີ່ຈະປະກາດພະທຳໃຫ້ພວກທະຫານຊຶ່ງຈະເດີນທາງໄປຮັບພາລະທົ່ວ
ແຜ່ນດິນຂອງຈັກກະພັດ. ປາກົດທົ່ວໄປໃນໝູ່ຄົນໃດ ວ່າການຈຳຈອງທີ່ໂປໂລຖືກນັ້ນກໍເພື່ອ
ພະຄຼິດ? (ຟລປ 1:13) ______________________________

ງ. ໃນ ຟີລິບປອຍ 4:22 ເຫັນວ່າໄພ່ພົນທັງປວງຂອງພະເຈົ້າກໍຝາກຄວາມຄຶດເຖິງເປັນຕົ້ນ
ພວກໃດ? ______________________________

ເບິ່ງຄືທະຫານຍາມໃນພະລາດຊະວັງຂອງກາຍຊາບາງຄົນກໍເຊື່ອດ້ວຍ!

**11** ຂ່າວດີກໍມີແລະຂ່າວບໍ່ດີກໍມີດ້ວຍ.

ກ. ໃນ ກລຊ 4:14 ແລະ ຟລມ 24. ໂປໂລອ້າງເຖິງລູກາກັບໃຜອີກ? _______________

ຂ. ແຕ່ໃນຈົດໝາຍສະບັບສຸດທ້າຍທີ່ໂປໂລຂຽນ ໂປໂລບອກຕີໂມທຽວວ່າເດມາເປັນຢ່າງໃດ?
(2 ຕມທ 4:10) ______________________________

## ໃຊ້ຜູ້ອື່ນອອກໄປປະກາດ

**12** ມີທັງຄົນເຂົ້າມາຫາໂປໂລ ແລະກໍມີທັງຄົນເດີນທາງຈາກ
ໂປໂລໄປຢ້ຽມຢາມຄຼິດສະຕະຈັກຕ່າງ ໆ.




ກ. ໂປໂລຝາກຄວາມໄປໂກໂລຊາຍກັບໃຜ?
(ກລຊ 4:7) ______________________________

ຂ. ເອົາໃຜໄປນຳ? (ກລຊ 4:9) __________________

ຄ. ເມື່ອໂປໂລກັບໝູ່ຫຼາຍຄົນເອົາຄວາມຊ່ວຍເຫຼືອໄປເຢລູຊາເລັມ ຕີຂີໂກນັ້ນເປັນຜູ້ຕາງໜ້າ
ຄຼິດສະຕະຈັກ ແຂວງໃດ? (ກຈກ 20:4) ______________________________

ງ. ໂປໂລໃຊ້ຕີຂີໂກໄປຢ້ຽມອີກຄຼິດສະຕະຈັກໃດ? (ອຟຊ 6:21) _______________

ຈ. ສະຫລຸບ. ໂປໂລໃຊ້ຕີຂີໂກນີ້ໄປເຖິງສອງຄຼິດສະຕະຈັກໃນແຂວງອາເຊຍ ຄືຄຼິດສະຕະຈັກ
ໃດ? ________________ ແລະ ________________

**13** ກ. ໂປໂລມີແຜນການທີ່ຈະໃຊ້ໃຜໄປອີກ? (ຟລປ 2:19) ____________________

ຂ. ໃຊ້ໄປຄຼິດສະຕະຈັກໃດ? ______________________________

ຄ. ແຂວງໃດ? ______________________________

**14** ກ. ໂປໂລໃຊ້ໃຜໄປໂກໂລຊາຍ ກັບ ເອເຟໂຊ? ______________________________

ຂ. ໃຊ້ໃຜໄປຟີລິບປອຍ? ______________________________

## ຂຽນຈົດໝາຍ




*ເມື່ອໂປໂລຖືກຂັງໄວ້ໃນເຮືອນຢູ່ ກຸງໂລມ ເພິ່ນ ຂຽນຈົດໝາຍ 4 ສະບັບ ທີ່ດີເລີດ, ໃຫ້ທ່ານເບິ່ງ ຕາຕະລາງຕໍ່ໄປນີ້.*

## ຈົດໝາຍຂອງໂປໂລ

| ສະໄໝໃນຊີວິດຂອງໂປໂລ | ລຳດັບ | ຂຽນໄປເຖິງ | ຂຽນມາຈາກ | ອາຍຸ |
|---|---|---|---|---|
| ໄປປະກາດເທື່ອທຳອິດ | 1 | ຄາລາເຕຍ | ອັນຕີໂອເຂຍ | 49 |
| ໄປປະກາດເທື່ອທີສອງ | 2 | ເທຊະໂລນິກທີ 1 | ຈາກໂກລິນໂທ | 51 |
| | 3 | ເທຊະໂລນິກທີ 2 | | 52 |
| ໄປປະກາດເທື່ອທີສາມ | 4 | ໂກລິນໂທທີ 1 | ເອເຟໂຊ | 53 |
| | 5 | ໂກລິນໂທທີ 2 | ມາເກໂດເນຍ | 56 |
| | 6 | ໂລມ | ໂກລິນໂທ | 57 |
| ຖືກຂັງໄວ້ເທື່ອທຳອິດ | 7 | ເອເຟໂຊ | ຈາກໂລມ (ບໍ່ແນ່ໃຈ) | 61 ເຖິງ 62 |
| | 8 | ໂກໂລຊາຍ | | |
| | 9 | ຟີເລໂມນ (ໃນໂກໂລຊາຍ) | | |
| | 10 | ຟີລິບປອຍ | | |
| ເຂົ້າປ່ອຍຈາກຄຸກຊົ່ວຄາວ | 11 | ຕີໂຕ (ຢູ່ກະເລເຕ) | (ບໍ່ຮູ້) | 63 ເຖິງ 66 |
| | 12 | ຕີໂມທຽວທີ 1 (ຢູ່ເອເຟໂຊ) | | |
| ຖືກຂັງໄວ້ເທື່ອທີສອງ | 13 | ຕີໂມທຽວທີ 2 (ຢູ່ເອເຟໂຊ) | (ບໍ່ຮູ້) | 67 |

**15** ຕາມໃນຕາຕະລາງນັ້ນ ໂປໂລຂຽນ 4 ສະບັບໃດ ໃນເວລາຖືກຂັງໄວ້ຢູ່ກຸງໂລມເທື່ອທຳອິດ?

ກ. ____________________ ຂ. ________________________

ຄ. ____________________ ງ. ________________________

ຈ. ຍັງມີອີກສະບັບໜຶ່ງທີ່ໂປໂລຂຽນຈາກໂລມທີ່ຫາຍໄປແລ້ວ ຄືຈົດໝາຍເຖິງຄຼິດສະຕະຈັກໃດ? (ກລຊ 4:16) ____________________________________________________

**16** ໃຫ້ອ່ານ 4 ຂໍ້ຕໍ່ໄປນີ້:

ເອເຟໂຊ 3:1 ໂກໂລຊາຍ 4:3

ຟີລິບປອຍ 1:7 ຟີເລໂມນ ຂໍ້ 23

ກ. ໃນທັງ 4 ຂໍ້ນັ້ນ ເຫັນວ່າໂປໂລຖືກຫຍັງ? ________________________________

ຂ. ເພາະເຫດນັ້ນເຮົາຄາດຄະເນວ່າໂປໂລຂຽນທັງ 4 ສະບັບນີ້ ເວລາຖືກຂັງໄວ້ໃນກຸງໃດ? _

**17** ກ. ຜູ້ບັນທຶກຂ່າວປະເສີດເຫຼັ້ມທີສາມ ຢູ່ກັບໂປໂລເວລານີ້ຄືໃຜ? ___________________

ຂ. ຖ້າລູກາຢູ່ຮ່ວມກັບໂປໂລດົນປານນັ້ນ ເພິ່ນອາດຈະຮຽນຮູ້ຫຼາຍຢ່າງຈາກໂປໂລ. ຖ້າຢ່າງນັ້ນຂ່າວປະເສີດລູກາ ອາດຈະອີງຕາມຄວາມຄິດຂອງລູກາ ກັບຜູ້ໃດອີກ? __________

ຄ. ຍັງມີຜູ້ບັນທຶກຂ່າວປະເສີດອີກຄົນໜຶ່ງຢູ່ກັບໂປໂລ ຄືໃຜ? _____________________

*ຫຼັງຈາກມາລະໂກແຍກຈາກໂປໂລຢູ່ປຳຟີເລຍນັ້ນ ເພິ່ນເດີນທາງປະກາດພະທຳກັບບາລະນາບາ ແລະອາດຈະມີໂອກາດຟັງຄຳເທດສະໜາຂອງເປໂຕ. ພວກເຮົາທຸກຄົນຮຽນຮູ້ຈາກຜູ້ອື່ນ, ລູກາອາດ ຈະຮຽນຮູ້ຈາກໂປໂລ. ມາລະໂກອາດຈະຮຽນຮູ້ຈາກເປໂຕ. ມັດທາຍກັບໂຢຮັນເຂົ້າເປັນສາວົກ ຂອງພະເຢຊູ. ດັ່ງນັ້ນມີໂອກາດຮຽນຈາກພະເຢຊູໂດຍກົງ, ລູກາກັບມາລະໂກບໍ່ໄດ້ເປັນສາວົກ ດັ່ງນັ້ນ ເຂົາອາດຈະສວຍໂອກາດຮຽນຮູ້ຈາກຜູ້ອື່ນ (ເຊັ່ນ: ໂປໂລກັບເປໂຕ). ເປັນຢ່າງໃດກໍຕາມເຂົາຢູ່ດ້ວຍ ກັນກັບໂປໂລໃນກຸງໂລມ. ເຂົາອາດຈະປຶກສາຫາລືກັນ ແລ້ວຈາກນັ້ນກໍນັ່ງໂຕະຂຽນຂ່າວປະເສີດຂອງໃຜ ຂອງລາວ ຕາມແບບຂອງແຕ່ລະຄົນ.*

**18** ກິດຈະການ 15:36-40. ລາຍງານເລື່ອງທີ່ເຂົາແຍກກັນໄປປະກາດພະທຳຄົນລະບ່ອນ. ຫຼັງຈາກນັ້ນ ລູກາຢູ່ກັບ ໂປໂລເປັນເວລາດົນ, ມາລະໂກຢູ່ກັບບາລະນາບາແລະເປໂຕ. ເຂົາຜິດຖຽງກັນຈົນແຍກກັນກໍບໍ່ດີ ແຕ່ຜົນສຸດທ້າຍ ເກີດເປັນການດີ ເພາະແບ່ງເປັນສອງພວກອອກໄປປະກາດພະທຳ, ມາລະໂກລາຍງານໃນຂ່າວປະເສີດ ຈາກແງ່ຄວາມເຫັນຂອງເປໂຕ ແລະລູກາລາຍງານຈາກແງ່ຄວາມເຫັນຂອງໂປໂລ. ໃຫ້ອ່ານ ໂລມ 8:28. ໃນຊີວິດຂອງທ່ານ ເຄີຍເກີດມີຜົນດີໃນສິ່ງທີ່ບໍ່ດີ ບໍ່? (ໃຫ້ຈົດເລື່ອງແລ້ວສະເໜີໃຫ້ໝູ່ຟັງໃນປະຊຸມ)

________________________________________________________________

________________________________________________________________

________________________________________________________________

**19** ທວນຄືນ. ເຖິງເຮົາບໍ່ຮູ້ແນ່ນອນກໍຕາມ ແຕ່ຄາດວ່າໂປໂລຂຽນຈົດໝາຍ 4 ສະບັບໃດ ເມື່ອຖືກຂັງໄວ້ໃນກຸງໂລມ ຄື 4 ສະບັບໃດ?

ກ. ______________________ ຂ. __________________________

ຄ. ______________________ ງ. __________________________

ຈ. ແມ່ນຜູ້ໃດທີ່ອາດຈະຮຽນຮູ້ຈັກຈາກໂປໂລ ກ່ອນຈະຂຽນຂ່າວປະເສີດ? ____________

ສ. ຜູ້ລາຍງານຄົນນັ້ນຂຽນພະທຳໃດອີກ? __________________________________

**20** ໂປໂລຮັບໃຊ້ພະເຈົ້າໃນເມື່ອຖືກຂັງໄວ້ໃນກຸງໂລມ ມີ 4 ດ້ານໃດ? (ຕື່ມຄວາມທີ່ຂາດ)

ກ. ______________________ ແຂກ ______________________________________

ຂ. ______________________ ອອກໄປ ____________________________________

ຄ. ______________________ ໝາຍ.

ງ. ______________________ ວອນ.

### ຄຳອ້ອນວອນ

*ການຮັບໃຊ້ພະເຈົ້າທຸກຢ່າງຂື້ນຢູ່ກັບ ຄຳອ້ອນວອນກ່ອນ. ໃນສະໄໝນັ້ນ ທຸກເທື່ອທີ່ອ່ານພະຄຳ ຫຼື ອ້ອນວອນ ເຂົາອອກສຽງດັງອີກດ້ວຍ.*


ຄຳອ້ອນວອນ

*ໃຫ້ທ່ານອ່ານຄຳອ້ອນວອນຂອງໂປໂລ ແລ້ວສຳນຶກວ່າຄຳອ້ອນວອນຂອງເພິ່ນແຕກຕ່າງກັນກັບຄຳອ້ອນວອນ ຂອງເຮົາຢ່າງໃດ? ອ່ານດັ່ງຕໍ່ໄປນີ້:*

*ເອເຟໂຊ 1:15-20 ແລະ 3:14-21.*
*ຟີລິບປອຍ 1:4-5 ແລະ 1:9-11.*
*ໂກໂລຊາຍ 1:9-10.*
*ຟີເລໂມນ ຂໍ້ 4 ແລະ ຂໍ້ 6.*
*ແລະອ່ານອີກທີ່ໂປໂລສັນລະເສີນພະເຈົ້າ.*
*ເອເຟໂຊ 5:19-20.*
*ໂກໂລຊາຍ 3:16.*

**21** ໂປໂລຖືກຜູກມັດຢູ່ ແຕ່ມີສິ່ງໃດທີ່ຖືກຜູກມັດບໍ່ໄດ້? (2 ຕມທ 2:9) __________________
ໃນເມື່ອໂປໂລຖືກຂັງໄວ້ຢ່າງນັ້ນ ເພິ່ນຍິ່ງປະກາດພະທຳໂດຍຫຼາຍວິທີທາງ. ຝ່າຍພວກເຮົາເຖິງວ່າຈະຢູ່ໃນສະ ພາບຍາກທີ່ສຸດກໍຕາມ ແຕ່ຍັງຮັບໃຊ້ພະເຈົ້າໄດ້. ທ່ານເອງຈະຮັບໃຊ້ພະເຈົ້າຢ່າງໃດ? (ບໍ່ຕ້ອງຕອບ)

| ຕອບ: |
|---|

1 ກ. ສອງລ້ານຄົນ. ຂ. ເຮືອນທີ່ເຊົ່າເອງ. ຄ. ທະຫານ.
ງ. ຄົນທັງປວງທີ່ມາຫາ. ຈ. ເລື່ອງລາດຊະອານາຈັກຂອງພະເຈົ້າ.

2 ກ. ລູກາ. ຂ. ອາລິຕາໂຂ. ຄ. ເອປາຟາ. ງ. ຕີໂມທຽວ. ຈ. ຮ້ອງເພງ.

3 ກ. 3 ວັນ. ຂ. ພວກຢິວ. ຄ. ຈຳນວນຫຼາຍກ່ວາເກົ່າ. ງ. ຍອມເຊື່ອ.
ຈ. ບໍ່ເຊື່ອ.

4 ກ. ພວກຢິວ. ຂ. ຄົນຕ່າງຊາດ. ຄ. ຮັບຟັງ.

5 ມາລະໂກ.

6 ກ. ໂອເນຊີໂມ ຂ. ຟີເລໂມນ. ຄ. ລູກຂອງໂປໂລ.

7 ກ. ເປັນອ້າຍນ້ອງກັນ. ຂ. ຈົ່ງຍົກໂທດໃຫ້ກັນແລະກັນ.

8 ກ. ມາລະໂກ. ຂ. ໂອເນຊີໂມ.

9 ກ. ເອປາໂຟດີໂຕ. ຂ. ເກືອບຕາຍ.

10 ກ. ທະຫານ. ຂ. ຍຸດທະພັນ. ຄ. ຜູ້ຄຸມແລະຄົນອື່ນ ໆ.
ງ. ຜູ້ທີ່ຢູ່ໃນພະລາດຊະວັງຂອງກາຍຊາ.

11 ກ. ເດມາ. ຂ. ຫຼົງຮັກໂລກປັດຈຸບັນ.

12 ກ. ຕີຂີໂກ. ຂ. ໂອເນຊີໂມ. ຄ. ອາເຊຍ. ງ. ຄູິດສະຕະຈັກເອເຟໂຊ.
ຈ. ໂກໂລຊາຍ ແລະ ເອເຟໂຊ.

13 ກ. ຕີໂມທຽວ. ຂ. ຟີລິບປອຍ. ຄ. ມາເກໂດເນຍ.

14 ກ. ຕີຂີໂກ. ຂ. ຕີໂມທຽວ.

15 ກ. ເອເຟໂຊ. ຂ. ໂກໂລຊາຍ. ຄ. ຟີເລໂມນ. ງ. ຟີລິບປອຍ. ຈ. ລາວດີເກອາ.

16 ກ. ຖືກຈຳຈອງໄວ້. ຂ. ກຸງໂລມ.

17 ກ. ລູກາ. ຂ. ໂປໂລ. ຄ. ມາລະໂກ.

18 (ບໍ່ມີຄຳຕອບຕາຍຕົວ)

19 ກ. ເອເຟໂຊ ຂ. ຟີລິບປອຍ. ຄ. ໂກໂລຊາຍ ງ. ຟີເລໂມນ. ຈ. ລູກາ
ສ. ກິດຈະການ.

20 ກ. ປະກາດໃຫ້ແຂກທີ່ມາຢ້ຽມ. ຂ. ໃຊ້ຜູ້ອື່ນອອກໄປປະກາດ. ຄ. ຂຽນຈົດໝາຍ.
ງ. ອ້ອນວອນ.

21 ພະຄຳຂອງພະເຈົ້າ.

**ການບ້ານບົດທີ 7 ພາກປາຍ**

# ທີ່ເຂົາປ່ອຍຊົ່ວຄາວ

(1 ຕີໂມທຽວ ແລະ ຕີໂຕ)

**1** ລູກາລາຍງານເລື່ອງທີ່ໂປໂລຖືກຂັງໄວ້ໃນເຮືອນຢູ່ກຸງໂລມ ແຕ່ຫຼັງຈາກນັ້ນບໍ່ໄດ້ລາຍງານ. ແຕ່ວ່າອີງຕາມຈົດໝາຍທີ່ຂຽນມາ ເບິ່ງຄືວ່າໂປໂລຮັບການປົດປ່ອຍຊົ່ວຄາວປະມານ 4 ປີ.

ກ. ໃນ ຟີເລໂມນ ຂໍ້ 22. ໂປໂລຂໍໃຫ້ຟີເລໂມນຈັດແຈງຫຍັງ? ____________________

ຂ. ໂປໂລຫວັງໃຈວ່າຢ່າງໃດ? ____________________________________________

ຄ. ແລະໃນ ຟີລິບປອຍ 1:19 ເຫັນມີຄວາມຫວັງຢ່າງໃດ?

________________________________________________________________

**2** ໃຫ້ທ່ານເບິ່ງຕາຕະລາງໜ້າ 117 ອີກ. ເພື່ອຈະຕອບຄຳຖາມຕໍ່ໄປນີ້:

ກ. ໂປໂລຖືກຂັງໄວ້ໃນກຸງໂລມຈັກເທື່ອ? ____________________________________

ຂ. ຫຼັງຈາກຖືກຂັງໄວ້ເທື່ອທຳອິດ ເຂົາປົດປ່ອຍເທົ່າປານໃດ? _____________________

ຄ. ເມື່ອປົດປ່ອຍນັ້ນ ເພິ່ນໄປຢ້ຽມຄຣິດສະຕະຈັກຕ່າງໆ ແລະຂຽນຈົດໝາຍອີກຈັກສະບັບ?

________________________________________________________________

ງ. ໃນ 1 ຕມທ 1:3 ເຫັນວ່າຂຽນຈົດໝາຍໄປຫາຕີໂມທຽວໃນເມືອງໃດ? _____________

ຈ. ຂຽນອີກສະບັບໜຶ່ງໄປຫາໃຜ? ___________________________________________

ສ. ຢູ່ໃສ? (ຕີໂຕ 1:5) _____________________________________________________

ຊ. ຫຼັງຈາກນັ້ນຖືກຈັບອີກ ຄາດວ່າໃນປີໃດ? __________________________________

ຍ. ເມື່ອຖືກຈັບຂັງໄວ້ເທື່ອທີສອງ ໂປໂລຂຽນຈົດໝາຍສະບັບໃດ? __________________

*ແລ້ວຖືກປະຫານຊີວິດ! ແຕ່ເຮົາຈະກັບໄປຮຽນເລື່ອງເມື່ອຄາວຖືກປົດປ່ອຍກ່ອນ.*

## ຄາວຖືກປົດປ່ອຍ

**3** ເຖິງເຮົາບໍ່ຮູ້ລຳດັບຕໍ່ກັນມາກໍຕາມ ແຕ່ຍັງຮູ້ບາງບ່ອນທີ່ໂປໂລໄປເຊັ່ນ:

ກ. ເທື່ອສຸດທ້າຍເມື່ອຖືກຂັງໄວ້ເຫັນວ່າເອລາຊະໂຕຄ້າງຢູ່ໃສ? (2 ຕມທ 4:20)

ຂ. ໝາຍໄວ້ໃນແຜນທີ່ໂດຍຕົວ ອັກສອນໃດ? ____________________




ຄ. ປະ ໂທຟີໂມຢູ່ໃສ? ___________

ງ. ໝາຍໂດຍຕົວອັກສອນໃດ? ____________________

ຈ. ໂປໂລປະເສື້ອຄຸມກັບໜັງສືໄວ້ທີ່ເມືອງໃດ? (2 ຕມທ 4:13) __________

ສ. ໝາຍໄວ້ໂດຍຕົວອັກສອນໃດ? ____________________

ຊ. ຕາມໃນ 1 ຕມທ 1:3 ປາກົດວ່າເພິ່ນປະ ຕີໂມທຽວໃຫ້ຄອຍຢູ່ໃນເມືອງໃດ? ____________________

ຍ. ແຕ່ໂປໂລເອງໄປແຂວງໃດ? ____________________

ດ. ສຸດທ້າຍໂປໂລຂຽນໄປເຖິງຕີໂຕຢູ່ເກາະກະເລເຕ ຄືອັກສອນໃດ? ______________

ຕ. ຂໍໃຫ້ ຕີໂຕ ຮີບໄປຫາຢູ່ເມືອງໃດ? (ຕີໂຕ 3:12) ____________________

ຖ. ໝາຍດ້ວຍອັກສອນໃດ? ____________________

> ມີຄຼິດສະຕະຈັກບາງບ່ອນທີ່ໂປໂລນຶກວ່າຈະບໍ່ເຫັນອີກເຊັ່ນ ຄຼິດສະຕະຈັກເອເຟໂຊ, ຫຼັງຈາກອອກໄປ ປະກາດເທື່ອທີສາມ ຊຶ່ງໄດ້ເຫັນໃນຄາວຖືກປົດປ່ອຍນັ້ນ. ໃນເມື່ອໂປໂລເດີນທາງໄປປະກາດເທື່ອທີ 3 ໂປໂລມີແຜນການວ່າຈະໄປປະເທດສະເປນ (ໂລມ 15:24) ແຕ່ໂປໂລຖືກຈັບໄປໃນກຸງເຢລູຊາເລັມ ຈຶ່ງໄປບໍ່ເຖິງປະເທດສະເປນ.
>
> ມີນັກປະຫວັດສາດທີ່ມີຊື່ວ່າ ເຄຼເມນໂຕ ທີ່ລາຍງານວ່າ "ໂປໂລໄປທາງທິດຕາເວັນຕົກຈົນສຸດທາງ" ທີ່ສະແດງວ່າໂປໂລອາດຈະໄປເຖິງສະເປນແທ້. ພະຄຳພີບໍ່ໄດ້ບອກດັ່ງນັ້ນເຮົາບໍ່ຮູ້ແນ່ນອນແຕ່ລັກຊະນະ ຂອງໂປໂລເປັນຄົນທີ່ຕັດສິນໃຈຢ່າງໃດກໍເຮັດຢ່າງນັ້ນ.

**4** ກ. ຫຼັງຈາກໂປໂລຖືກຂັງໄວ້ເທື່ອສຸດທ້າຍ ພຽງແຕ່ 30 ປີ. ມີນັກປະຫວັດສາດລາຍງານວ່າໂປໂລໄປເຖິງ ສຸດທິດໃດ? ____________________

ຂ. ນັກປະຫວັດສາດນັ້ນຊື່ຫຍັງ? ____________________

ຄ. ນັກປະຫວັດສາດນັ້ນ ຢູ່ໃນເມືອງຫຼວງຂອງຈັກກະພັດ ຄືກຸງໃດ? ______________

ງ. ຈຸດສຸດທ້າຍຂອງເສັ້ນທາງ,ທາງທິດຕາເວັນຕົກຂອງຈັກກະພັດໂລມ ຄືປະເທດໃດ? (ເບິ່ງໃນແຜນທີ່ໜ້າ 57). ____________________________________________

ຈ. ໂປໂລຕັ້ງໃຈວ່າຈະໄປປະເທດສະເປນ ແຕ່ກໍໄປບໍ່ເຖິງ. ຫຼັງຈາກນັ້ນມາມີຄາວໜຶ່ງທີ່ໂປໂລມີຄວາມເສລີ ແລະຈຶ່ງຈະໄດ້ໄປ, ໂປໂລມີເວລາທີ່ຈະໄປຈັກປີ? ________________

## ຈົດໝາຍທີ່ໂປໂລຂຽນໃນເມື່ອຖືກປ່ອຍ

**5** ກ. ໃນເມື່ອໂປໂລຖືກປົດປ່ອຍ ເພິ່ນຂຽນສອງສະບັບໃດ? __________ ແລະ ________

ຂ. ຖືກຂັງໄວ້ເທື່ອສຸດທ້າຍ ຂຽນອີກສະບັບໃດ? ______________________________

ຄ. ຫຼັງຈາກນັ້ນຖືກຫຍັງ? ____________________________________________

**6** ຕີໂຕເປັນຄົນຕ່າງຊາດທີ່ເດີນທາງຮ່ວມກັບໂປໂລກ່ອນໝູ່.

ກ. ເມື່ອໂປໂລເອົາຕີໂຕໄປແນະນຳໃຫ້ຄຼິດສະຕຽນຊາດຢິວໃນກຸງເຢລູຊາເລັມ ເຂົາຢາກໃຫ້ຮັບພິທີໃດ? (ຄລຕ 2:3-4) ____________________________________________

ເນື່ອງຈາກຕີໂຕບໍ່ເປັນຊາດຢິວໂປໂລບໍ່ໃຫ້ຮັບ.

ຂ. ເມື່ອໂປໂລໄປປະກາດເທື່ອທີສາມ ໂປໂລໃຊ້ຕີໂຕໄປຢ້ຽມຄຼິດສະຕະຈັກໃດ? (2 ກລທ 7:6-7) ______________________________ ຕີໂຕຊ່ວຍແກ້ບັນຫານັ້ນ.

ຄ. ຈາກນັ້ນ ຕີໂຕເປັນຜູ້ຮັບຜິດຊອບສອນໃນຄຼິດສະຕະຈັກໃໝ່ຢູ່ເກາະໃດ? __________

**7** <u>ຕີໂມທຽວ</u>

ກ. ເປັນຄົນທີ່ໂປໂລຖືວ່າເປັນລູກແທ້ໃນຫຍັງ? (1 ຕມທ 1:2) __________________

ໂປໂລນຳໃຫ້ຕີໂມທຽວຮັບເຊື່ອພະອົງໃນແຂວງຄາລາເຕຍ.

ຂ. ໃນ 2 ຕມທ 3:11 ນຶກເຖິງຫຼາຍປີກ່ອນທີ່ເຂົາໄປຢ້ຽມ 3 ຄຼິດສະຕະຈັກໃດ?

________________ ___________________ ແລະ ________________

ຄ. ເມື່ອໂປໂລຂຽນນີ້ ຕີໂມທຽວຮັບໃຊ້ໃນຄຼິດສະຕະຈັກໃດ? ____________________

**8** ໂປໂລຂຽນທັງສອງສະບັບນັ້ນໃນຄາວດຽວກັນ ດັ່ງນັ້ນມີສ່ວນຄ້າຍຄືກັນບາງຢ່າງ. ໃຫ້ອ່ານ 1 ຕີໂມທຽວ 3:1-7. ແລ້ວປຽບທຽບກັບ ຕີໂຕ 1:5-9 ທັງສອງຕອນຊີ້ແຈງເລື່ອງຄຸນສົມບັດພວກໃດ? __________________________________________________

*ໝາຍເຫດ: ຄົນໃດທີ່ຮຽນຫຼັກສູດໂປໂລເຫຼັ້ມທີ 2, ກໍໄດ້ສຶກສາເລື່ອງພະທຳຕີໂມທຽວທັງສອງສະບັບ ມາໃນການປະຊຸມບົດທີ 2. ໃຫ້ທ່ານກັບໄປທວນຄືນໃນບົດນັ້ນ.*

# ໂປໂລຖືກຂັງໄວ້ເທື່ອທີສອງ

ຄາວທີ່ໂປໂລຖືກຂັງໄວ້ເທື່ອທີສອງນີ້ ເປັນຄາວທີ່ຈິບຫາຍເພື່ອພວກຄຼິດສະຕຽນ. ເຈົ້າຈັກກະພັດກຼາວດີໂອ ຕາຍແລ້ວ ເນໂລຂຶ້ນຕຳແໜ່ງເປັນເຈົ້າຈັກກະພັດ ໃນປີ ຄ. ສ 64. ໃນຄາວນັ້ນກຸງໂລມຖືກໄຟໄໝ້ໃຫຍ່ ເຈົ້າຈັກກະພັດເນໂລສວຍໂອກາດຫາຜິດວ່າ ຄຼິດສະຕຽນເປັນຜູ້ຈູດກຸງໂລມ. ເຂົາຖິ້ມຄຼິດສະຕຽນບາງຄົນລົງ ໃນຖ້ຳສິງໂຕ ບາງເທື່ອເຂົາກໍເອົາຢາງທາໃສ່ຄຼິດສະຕຽນແລ້ວເຜົາທັງເປັນ. ເພາະເຫດນັ້ນ ຄຼິດສະຕຽນຫຼາຍຄົນລີ້ຕົວໃນຫລຸມເກືອໄຕ້ດິນ,ໃນຄາວນັ້ນເຂົາກໍ່ຈັບໂປໂລ ແຕ່ເທື່ອນີ້ບໍ່ໄດ້ຂັງໄວ້ໃນເຮືອນ. ເຂົາ ຂັງໄວ້ໃນຄຸກມືດ, ຄົນເຖົ້າໃນຄຸກໃຕ້ດິນທີ່ໜາວເຢັນຢ່າງນັ້ນ ອາດຈະເຈັບປວດຕົນຕົວຫຼາຍ.

**9** ກ. ເທື່ອກ່ອນໂປໂລຖືກຂັງໄວ້ຢູ່ໃສ? ____________________

ຂ. ເທື່ອທີສອງເຂົາຂັງໄວ້ຢູ່ໃສ? ____________________

ຄ. ເຈົ້າຈັກກະພັດໂລມນັ້ນຊື່ຫຍັງ? ____________________

ງ. ພວກຄຼິດສະຕຽນລີ້ຕົວຢູ່ໃສ? ____________________

ຈ. ໃຕ້ກຸງໃດ? ____________________

**10** ກ. ເພາະເຫດການຂົ່ມເຫັງຢ່າງໜັກໜ່ວງນັ້ນ ຄຼິດສະຕຽນຕະຫຼອດເຖິງແຂວງອາເຊຍ ພວກເຂົາຫຼີບໜ້າໜີໃຜ? (2 ຕມທ 1:15) ____________________

ຂ. ໃນເມື່ອພະເຢຊູຖືກຈັບພວກສາວົກຂອງພະອົງຫຼີບໜີ ເຊັ່ນດຽວກັນກັບພວກຄຼິດສະຕຽນຫຼີບໜີຈາກໂປໂລ. ເມື່ອໂປໂລໄດ້ເວົ້າແກ້ຄະດີເທື່ອທຳອິດມີຜູ້ໃດເຂົ້າຂ້າງໂປໂລ? (2 ຕມທ 4:16) ____________________

ຄ. ແຕ່ພະເຈົ້າຊົງເຂົ້າຂ້າງ ແລ້ວໃນໂອກາດນີ້ ໂປໂລຍັງສວຍໂອກາດປະກາດຫຍັງ? (2 ຕມທ 4:17) ____________________

ງ. ໂປໂລປ່ຽວໃຈແທ້. ບໍ່ມີພີ່ນ້ອງຢູ່ນຳ ແຕ່ມີໃຜມາຊູໃຫ້ມີກຳລັງຂຶ້ນ? ____________________

ຈ. ພະອົງໂຜດໃຫ້ຫລຸດພົ້ນຈາກປາກສັດໃດ? ____________________

*ໂປໂລຢູ່ໃນສະພາບຈິບຫາຍກໍຕາມ ແຕ່ຍັງຊຽນຈົດໝາຍ 2 ຕີໂມທຽວ.*

## ໂປໂລຖືກປະຫານຊີວິດ

*ພະຄຳພີບໍ່ໄດ້ລາຍງານເລື່ອງຄວາມຕາຍຂອງໂປໂລ ແຕ່ເນື່ອງຈາກເປັນພົນລະເມືອງໂລມ ເຂົາອາດຈະເອົາດາບ ຂອງທະຫານຕັດຫົວ. ເປໂຕຖືກຄຶງໄວ້ທີ່ໄມ້ກາງເຂນ ແຕ່ຄຶງໄວ້ແບບໃຫ້ເອົາຫົວລົງລຸ່ມ*

**11** ໂປໂລບໍ່ຢ້ານຕາຍ. (ໃຫ້ຕື່ມຄວາມທີ່ຂາດລຸ່ມນີ້)

ກ. ໃນ ຟລປ 1:23. ບອກວ່າ....
"ເຮົາມີຄວາມປາຖະໜາທີ່ຈະຈາກໄປເພື່ອຢູ່ກັບພະຄຼິດຊຶ່ງ ________________ ກ່ວາ".

ຂ. ໃນ 2 ຕມທ 4:7-8. ບອກວ່າ "ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ ແຕ່ນີ້ຕໍ່ໄປພວງມາໄລຄື ______________ ແຫ່ງຄວາມຊອບທຳ ຊຶ່ງຈັດໄວ້ຖ້າເຮົາ ແລ້ວ.... "

ຄ. ໃນໂລມ 8:18. ໂປໂລ ກ່າວວ່າ " ເພາະເຮົາເຫັນວ່າ ຄວາມ ____________________ ໃນສະໄໝປັດຈຸບັນ ບໍ່ສົມຄວນທີ່ຈະເອົາໄປປຽບກັບສະຫງ່າລາສີທີ່ຈະເຜີຍໃຫ້ເຮົາທັງຫຼາຍເຫັນ.

ງ. ໃນໂລມ 8:35. "ໃຜຈະໃຫ້ພວກເຮົາຂາດຈາກ ______________________________ ຂອງພະຄຼິດໄດ້ ຈະເປັນຄວາມທຸກລຳບາກ ຫຼື ຄວາມທໍລະມານຈິດໃຈ ຫຼື ການຂົ່ມເຫັງ.... ຫຼື ການຖືກໂພຍໄພ ຫຼືການຖືກຄົມດາບ.... "

*ພວກທະຫານໂລມນຳເອົາໂປໂລ ໄປນອກກຳແພງກຸງໂລມເພື່ອຕັດຫົວ. ປະຊາຊົນອາດຈະບໍ່ສັງເກດພໍ່ເຖົ້າ ຍິວທີ່ເຂົາຈະເອົາໄປຂ້າ ແຕ່ອົງພະຜູ້ ເປັນເຈົ້າທີ່ພວກທະຫານບໍ່ເຫັນ ພະອົງລໍຖ້າຕ້ອນຮັບໂປໂລເຂົ້າ ສະຫວັນຮັບນໍລະດົກ.*



| ຕອບ: | |
|---|---|
| **1** | *ກ. ທີ່ພັກ. ຂ. ພະເຈົ້າຈະໃຫ້ມາຫາ. ຄ. ຫວັງວ່າຈະເຖິງການປົດປ່ອຍ.* |
| **2** | *ກ. 2 ເທື່ອ. ຂ. 4 ປີ. ຄ. 2 ສະບັບ. ງ. ເອເຟໂຊ. ຈ. ຕີໂຕ. ສ. ເກາະກະເລເຕ. ຊ. ປີ 67. ຍ. 2 ຕີໂມທຽວ.* |
| **3** | *ກ. ໂກລົບໂຫ. ຂ. ອັກສອນ (ງ). ຄ. ມີເລໂຕ. ງ. ອັກສອນ (ກ). ຈ. ໂທອາດ. ສ. ອັກສອນ (ຄ). ຊ. ເອເຟໂຊ. ຍ. ມາເກໂດຍເນຍ. ດ. ອັກສອນ (ສ). ຕ. ນີໂກໂປລີ. ຖ. ອັກສອນ (ຈ).* |
| **4** | *ກ. ສຸດທິດຕາເວັນຕົກ. ຂ. ເຄເມນໂຕ. ຄ. ໂລມ. ງ. ປະເທດສະເປນ. ຈ.4 ປີ.* |
| **5** | *ກ. 1 ຕີໂມທຽວແລະຕີໂຕ. ຂ. 2 ຕີໂມທຽວ. ຄ. ຖືກປະຫານຊີວິດ.* |
| **6** | *ກ. ພິທີຕັດ. ຂ. ໂກລົບໂຫ. ຄ. ກະເລເຕ.* |
| **7** | *ກ. ໃນຄວາມເຊື່ອ. ຂ. ອັບຕີໂອເຂຍ, ອີໂກນີອົນ ແລະ ລີຊະທາ. ຄ. ເອເຟໂຊ.* |
| **8** | *ຜູ້ດູແລ (ຜູ້ນຳກຳໄດ້).* |
| **9** | *ກ. ໃນເຮືອນ. ຂ. ຄຸກມືດ. ຄ. ເນໂລ. ງ. ຫລຸມເກືອໃຕ້ດິນ. ຈ. ກຸງໂລມ.* |
| **10** | *ກ. ຫຼີບໜ້າໜີຈາກໂປໂລ. ຂ. ບໍ່ມີຈັກຄົນ. ຄ. ພະທຳ. ງ. ພະເຈົ້າ. ຈ. ສິງໂຕ.* |
| **11** | *ກ. ປະເສີດຫຼາຍ. ຂ. ລາງວັນ. ຄ. ທຸກລຳບາກ. ງ. ຄວາມຮັກ.* |

**ໃນການປະຊຸມບົດທີ 7**

# ໂປໂລມີອາຍຸຫຼາຍແລ້ວແຕ່ຍັງຄະໜຶ່ງເຖິງອະນາຄົດ

(2 ຕີໂມທຽວ)

*ໂປໂລຮັບໃຊ້ພະເຈົ້າເກືອບ 30 ປີ. ຕີໂມທຽວສະບັບທີສອງ ເປັນຈົດໝາຍສະບັບສຸດທ້າຍທີ່ໂປໂລຂຽນ. ເພິ່ນເຫັນວ່າ ໃນບໍ່ເຫິງເຂົາຈະຕັດຫົວເພິ່ນ ດັ່ງນັ້ນມີຄຳເຕືອນເພື່ອຄົນທີ່ຢູ່ໃນອະນາຄົດ. ມີ 3 ເລື່ອງໃນອະນາຄົດຄື:*

- *ໂປໂລຈະໄປຢູ່ກັບພະເຢຊູ.*
- *ໂປໂລຫ່ວງເລື່ອງຕີໂມທຽວທີ່ຈະປະກາດພະທຳຕໍ່ໄປ.*
- *ຍັງຫ່ວງພວກຄຼິດສະຕຽນໃນຄາວສຸດທ້າຍ (ສະໄໝເຮົານີ້).*

## ໂປໂລຈະໄປຢູ່ກັບພະເຢຊູ

**1** ເມື່ອໂປໂລຖືກຂັງໄວ້ເທື່ອທຳອິດ ເພິ່ນຂຽນເລື່ອງອະນາຄົດໃນ ຟລປ 3:12-14. ເມື່ອຖືກຂັງໄວ້ໂດຍເຈົ້າຈັກກະພັດ ເນໂລເທື່ອທີສອງ ເພິ່ນຂຽນເລື່ອງອະນາຄົດໃນ 2 ຕີໂມທຽວ 4:6-8. ໃຫ້ທ່ານເປີດອ່ານທັງສອງ. ມີສ່ວນຄ້າຍຄື ກັນແລະມີສ່ວນແຕກຕ່າງກັນ.

ກ. ຈຸດຄ້າຍຄືກັນແມ່ນທັງສອງສະບັບຈະຄະນຶງເຖິງຍຸກໃດ? ______________________

ຂ. ທັງສອງກ່າວເລື່ອງທີ່ຈະຮັບຫຍັງທີ່ຈັດໄວ້ຖ້າ? ____________________________

ຄ. ມີສ່ວນແຕກຕ່າງກັນ ໃນຕອນໃດທີ່ໂປໂລເຫັນວ່າວຽກສຳເລັດ? ________________

ງ. ເຖິງເວລາທີ່ໃຜຈະຈາກໄປ? __________________________________________

ຈ. ໃນທັງສອງສະບັບໂປໂລຄະນຶງເຖິງທີ່ຈະຮັບລາງວັນ ແຕ່ໃນພະທຳສະບັບໃດທີ່ຈະຮັບໃນບໍ່ຊ້ານີ້? ______________________________________________________

**2** ຖ້າທ່ານເອງສຳນຶກຕົວວ່າໃນບໍ່ຊ້ານີ້ຈະລັບຕາລາໂລກໄປ ທ່ານຈະມີຄວາມຮູ້ສຶກຢ່າງໃດ? (ໃຫ້ເລືອກ)

ກ. ຢ້ານເພາະບໍ່ຮູ້ເລື່ອງໃນອະນາຄົດ.

ຂ. ເສຍໃຈໜັກເພາະສິ່ງທີ່ຢາກເຮັດກ່ອນ ກໍເຮັດບໍ່ສຳເລັດ.

ຄ. ໂອ້ແທ້! ບໍ່ທັນໄດ້ເຮັດຫຍັງກໍເຖິງເວລາຈະຕາຍແລ້ວ.

ງ. ຊົມຊື່ນໃຈທີ່ຊີວິດຈະເສຍໄປໂດຍບໍ່ມີຜົນລັບສຳຄັນ.

**3** ໃຫ້ອ່ານໃນ 2 ຕີໂມທຽວ 4:8 ອີກ.

ກ. ກ່າວເລື່ອງລາງວັນຂອງໂປໂລຜູ້ດຽວຫຼືຄຼິດສະຕຽນທຸກຄົນ? ___________________

ຂ. ຖ້າເປັນຢ່າງນັ້ນ ຄຼິດສະຕຽນເຮົາທຸກຄົນຈະຢ້ານຄວາມຕາຍ ຫຼື ຈະຄິດເຖິງລາງວັນທີ່ຈະໄດ້ຮັບໃນສະຫວັນ? ______________________________________________

**4** ຖ້າຄຼິດສະຕຽນຄົນໃດເຫັນວ່າໃກ້ຈະລັບຕາລາໂລກໄປແລ້ວ ຄົນນັ້ນຈະມີຄວາມເຊື່ອໝັ້ນຄົງໄດ້. ໃຫ້ອ່ານ 2 ຕີໂມທຽວ 1:9 ແລະ ຂໍ້ 11-12. ຖ້າອ່ານແລ້ວໃຫ້ປຽບກັບຄຳເວົ້າຂອງພະເຢຊູ ໃນ ໂຢຮັນ 14:2-3 ທ່ານອາດຈະປອບໃຈຄົນນັ້ນໃຫ້ແນ່ໃຈວ່າພະເຢຊູຈະຕ້ອນຮັບຢ່າງໃດໄດ້? ______________________________________________

______________________________________________

______________________________________________

______________________________________________

*ຄຳວ່າ "ວັນນັ້ນ" ໃນ 2 ຕີໂມທຽວ 1:12. ອ້າງເຖິງວັນທີ່ພະເຢຊູຈະກັບມາອີກ. (2 ຕີໂມທຽວ 1:18. 2 ຕີໂມທຽວ 4:8 ແລະ 2 ເທຊະໂລນິກ 1:10)*

**5** ຄົນທີ່ຈວນຈະເຖິງວັນສິ້ນຊີວິດອາດຈະເປັນຫ່ວງສອງປະການເປັນຕົ້ນ:

- ຫ່ວງເລື່ອງຄວາມຕາຍ ແລະຫຼັງຈາກຕາຍຈະເປັນຢ່າງໃດ.
- ຫ່ວງເລື່ອງພີ່ນ້ອງທີ່ຈະປະໄປ.

ກ. ທ່ານອາດຈະເປັນຫ່ວງເລື່ອງໃດຫຼາຍກ່ວາ? ______________________

ຂ. ໂປໂລເປັນຫ່ວງເລື່ອງໃດ? (ໃຫ້ອ່ານ ຟລປ 1:21-26) ________________

ຄ. ພະເຢຊູເປັນຫ່ວງເລື່ອງໃຜ ໃນເມື່ອຈະຕາຍທີ່ໄມ້ກາງແຂນ (ຢຮ 19:25-27) ________

## ໂປໂລຫ່ວງເລື່ອງຕີໂມທຽວທີ່ຈະປະກາດພະທຳຕໍ່ໄປ

**6** ໂປໂລຮູ້ດີວ່າ ພວກຄຼິດສະຕຽນຈະພົບຄວາມຍາກລຳບາກ. ຮູ້ດີວ່າຈະຕ້ອງທົນຄວາມທໍລະມານຫຼາຍປະການໃນອະນາຄົດ ເຖິງເຂົາຈະປະຫານຊີວິດຂອງເພິ່ນເອງກໍຕາມ ເພິ່ນຫ່ວງເລື່ອງຄຼິດສະຕຽນທີ່ຍັງຈະມີຊີວິດຢູ່.

ໃຫ້ອ່ານໃນ 2 ຕີໂມທຽວ 3:1-5. ທີ່ກ່າວເລື່ອງຄົນທົ່ວໄປໃນຄາວທີ່ສຸດ.

ກ. ເຂົາຈະເຫັນແກ່ຫຍັງ? (ຂໍ້ 2) ______________ ແລະ __________

ຂ. ຮັກຄວາມສະນຸກຫຼາຍກ່ວາຮັກໃຜ? (ຂໍ້ 4) ______________________

ຄ. ເຂົາປະຕິເສດລິດອຳນາດໃດ? (ຂໍ້ 5) _________________________

ງ. ບໍ່ຮູ້ຈັກບັງຄັບຫຍັງ? (ຂໍ້ 3) ______________________________

*ລູກຫຼານຂອງເຮົາອາດຈະພົບຄົນຢ່າງທີ່ເຫັນໃນ 2 ຕີໂມທຽວ 3:1-5. ຈາກຍຸກຂອງໂປໂລມາເຖິງ ຍຸກເຮົານີ້ເຄີຍເຫັນມາ. ເຫັນວ່າພະເຈົ້າສາມາດຮັກສາໂປໂລໄດ້ ດັ່ງນັ້ນຈະຮັກສາຄົນໃນອະນາຄົດ ໄດ້ດ້ວຍ.*

**7** ເຖິງຈະມີຄົນໂຫດຮ້າຍມາຕໍ່ສູ້ກໍຕາມ ແຕ່ ໂປໂລ ຍັງປະກາດພະທຳໄປໄດ້.

| | | |
|---|---|---|
| -"- | ແຕ່ ຕີໂມທຽວ | -"- |
| -"- | ແຕ່ ຜູ້ສືບທອດຕໍ່ມາ | -"- |
| -"- | ແຕ່ ພວກເຮົາໃນຄາວນີ້ | -"- |
| -"- | ແຕ່ ລູກຫຼານຕໍ່ ໆໄປ | -"- |

ໂປໂລເຫັນວ່າຕ້ອງເຕືອນຕີໂມທຽວໄວ້. ໃຫ້ອ່ານ 2 ຕີໂມທຽວ 3:13-17. ຝ່າຍໂປໂລກໍມີຜູ້ຕໍ່ສູ້ ເພິ່ນເຕືອນວ່າຕີໂມທຽວກໍຈະມີຜູ້ຕໍ່ສູ້, ມາເຖິງຄຼິດສະຕຽນໃນສະໄໝນີ້ກໍຍັງມີຜູ້ຕໍ່ສູ້. ໃນ 2 ຕມທ 3:13-17 ນີ້ ໂປໂລບອກວິທີປ້ອງກັນຕົວ.

ກ. ຈົ່ງດໍາເນີນຕໍ່ໄປໃນສິ່ງໃດ? (ຂໍ້ 14) ______________________________

ຂ. ແມ່ນສິ່ງໃດທີ່ສາມາດໃຫ້ມີປັນຍາ? (ຂໍ້ 15) ___________________________

ຄ. ພະທໍາທຸກຕອນເປັນປະໂຫຍດໃນ 4 ດ້ານໃດ? (ຂໍ້ 16) ____________________

**8** ໂປໂລສັງເກດໄວ້ວ່າ ຂ້າໃຊ້ຂອງພະເຈົ້າຈະປະກາດພະທໍາຕໍ່ປະຊາຊົນທີ່ເຫັນແກ່ຕົວເອງ ທີ່ຢາກໄດ້ແຕ່ ສິ່ງຂອງ ແລະຖືສາສະໜາຢ່າງປອມ ດັ່ງນັ້ນພວກຄຼິດສະຕຽນຕ້ອງຮຽນຮູ້ປ້ອງກັນຕົວຈາກການອະທໍານັ້ນ. ໃຫ້ອ່ານ ໃນ 2 ຕີໂມທຽວ 4:3-5.

ກ. ເຂົາຈະຮວບຮວມຄູຢ່າງໃດ? (ຂໍ້ 3) ______________________________

ຂ. ຈະອວຍຫູໜີຈາກຫຍັງ? (ຂໍ້ 4) _________________________________

ຄ. ໂປໂລເຕືອນຕີໂມທຽວໃຫ້ອົດທົນຕໍ່ຫຍັງ? (ຂໍ້ 5) _______________________

ງ. ຈົ່ງເຮັດໜ້າທີ່ໃດ? ___________________________________________

*ໂປໂລກໍຄິດເຖິງຄຼິດສະຕຽນໃນອະນາຄົດອີກດ້ວຍ ຄື:*

## ຍັງຫ່ວງພວກຄຼິດສະຕຽນໃນຄາວສຸດທ້າຍ

**9** ໂປໂລກ່າວເຕືອນຕີໂມທຽວ ແຕ່ຍິ່ງກວ່ານັ້ນອີກ ເພິ່ນກ່າວເຈາະໄປຫາຄຼິດສະຕຽນໃນອານາຄົດອີກດ້ວຍ.

ກ. ໃນ 2 ຕີໂມທຽວ 3:1 ໃນຄາວໃດທີ່ຈະເກີດຄວາມລໍາບາກຢ່າງຮ້າຍແຮງ? __________

ຂ. ໂປໂລສະເໜີວິທີໃດເພື່ອການສອນຄຼິດສະຕຽນທົ່ວໄປໃນອະນາຄົດ? (2 ຕມທ 2:2) ___

_____________________________________________________________

_____________________________________________________________

ຄ. ມາເຖິງນີ້ທ່ານໄດ້ຮຽນເລື່ອງໂປໂລຫຼາຍແລ້ວ. ທ່ານຮຽນມາເພື່ອຈະໃຊ້ຕໍ່ໄປ, ບໍ່ແມ່ນຮຽນໄວ້ເພື່ອເພີ່ມຄວາມ ຮູ້ຢ່າງດຽວ ທ່ານຈະສອນຄົນອື່ນໄດ້ຢ່າງໃດ? ______________

_____________________________________________________________

_____________________________________________________________

ໂປໂລຈວນຈະເຖິງສິ້ນຊີວິດ ຢູ່ໃນສະພາບຍາກປານນັ້ນກໍຍັງຄະນຶງເຖິງອະນາຄົດຢູ່. ໃຫ້ອ່ານຂໍ້ພະທໍາລຸ່ມຮູບນີ້:



*"ເຮົາກໍາລັງບາກບັ່ນມຸ້ງໜ້າໄປສູ່ຫຼັກໄຊ ເພື່ອຈະໄດ້ຮັບລາງວັນ". ຟີລິບປອຍ 3:14.*

ສ່ວນໂປໂລເອງ ເພິ່ນລໍຖ້າແຕ່ຈະເຫັນໜ້າຂອງພະເຢຊູ. ສ່ວນຄຼິດສະຕະຈັກ ໂປໂລທີ່ຖືກຂັງໄວ້ໃນຫ້ອງມືດ ກໍຍັງເຈາະຫາອະນາຄົດທີ່ພີ່ນ້ອງສັດຊື່ຈະສອນຜູ້ອື່ນຕາມລໍາດັບຕໍ່ກັນໄປຈົນເຖິງພະເຢຊູຈະສະເດັດມາອີກ. ຄວາມ ຫວັງຂອງໂປໂລບໍ່ຜິດ, ມາເຖິງທຸກວັນນີ້ຍັງມີຄົນສອນຕໍ່ ໆ ກັນໄປ. ຝ່າຍພວກເຮົາໃນຍຸກນີ້ຍັງສັ່ງສອນຜູ້ອື່ນຕໍ່ໄປຕາມ ແບບທີ່ໂປໂລສອນຕີໂມທຽວ. ໃນ ຟີລິບປອຍ 1:21. ໂປໂລກ່າວວ່າ:

"ເພາະວ່າຖ້າເຮົາມີຊີວິດ ພະຄຼິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປະໂຫຍດແກ່ເຮົາ".

*ໃຫ້ພວກເຮົາຖືຢ່າງດຽວກັນກັບໂປໂລ!*

- *ອາທິດນີ້ບໍ່ມີບົດເສັງ ເພື່ອທ່ານຈະມີໂອກາດທວນຄືນກ່ອນບົດເສັງສຸດທ້າຍອາທິດໜ້າ. ໃຫ້ຕັ້ງໃຈທວນ ຄືນຕັ້ງແຕ່ວັນນີ້ເປັນຕົ້ນໄປ!*
- *ວິທີທວນຄືນວິທີໜຶ່ງ ຄື ໃຫ້ກັບໄປຮຽນຕາມບົດເສັງທຸກບົດ.*
- *ອີກວິທີໜຶ່ງ ຄື ກັບໄປເບິ່ງຮູບແລະແຜນທີ່ທຸກໃບ.*

ຕອບ:

**1** *ກ. ອະນາຄົດ. ຂ. ລາງວັນ. ຄ. 2 ຕີໂມທຽວ. ງ. ໂປໂລ. ຈ. 2 ຕີໂມທຽວ.*

**2** *(ຄຳຕອບບໍ່ຕາຍຕົວ, ໂປໂລຄິດຢ່າງນີ້, ແຕ່ທ່ານຄິດຢ່າງໃດ ອາດຈະບໍ່ຖືກກັບຈັກຂໍ້ທີ່ສະເໜີມານັ້ນ).*

**3** *ກ. ຊີວິດສະຕຽນທຸກຄົນ. ຂ. ຈະຄິດເຖິງລາງວັນໃນສະຫວັນ.*

**4** *(ຄຳຕອບບໍ່ຕາຍຕົວ, ແຕ່ໃຫ້ບອກວ່າຄວາມລອດບໍ່ໄດ້ຢູ່ກັບເຮົາ, ແຕ່ຂຶ້ນກັບພະຄຸນຂອງພະເຢຊູ).*

**5** *ກ. (ຄຳຕອບບໍ່ຕາຍຕົວ) ຂ. ເລື່ອງພີ່ນ້ອງ. ຄ. ເປັນຫ່ວງແມ່.*

**6** *ກ. ເຫັນແກ່ຕົວແລະເຫັນແກ່ເງິນ. ຂ. ຫຼາຍກ່ວາຮັກພະເຈົ້າ. ຄ. ຂອງພະເຈົ້າ. ງ. ບໍ່ຮູ້ຈັກບັງຄັບຕົນ.*

**7** *ກ. ສິ່ງທີ່ຮຽນຮູ້ແລ້ວ. ຂ. ພະທຳຄຳພີ. ຄ. ການສອນ, ການຕັກເຕືອນ, ການປັບປຸງແກ້ໄຂ, ການອົບຮົມໃນທາງຊອບທຳ.*

**8** *ກ. ສຳລັບເຂົາ. ຂ. ໜີຈາກຄວາມທ່ຽງທຳ. ຄ. ການຍາກລຳບາກ. ງ. ໜ້າທີ່ຂອງຜູ້ປະກາດ.*

**9** *ກ. ໃນຄາວສຸດທ້າຍ. ຂ. ສິ່ງທີ່ຕີໂມທຽວຮຽນມາຈາກໂປໂລ ຈົ່ງສອນໃຫ້ຄົນ ຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ (ຄ້າຍຄືກໍໄດ້). ຄ. (ບໍ່ມີຄຳຕອບທີ່ຖືກຕາຍຕົວ).*